**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 0828/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 20 MAR 2023

## ໃບລາຍງານ

**ຮຽນ:** ທ່ານຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື,

**ເລື່ອງ:** ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ສະໄໝສາມັນຄັ້ງທີ 1/2023.

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບແລະບໍລິສັດຈົດທະບຽນ (ສະບັບປັບປຸງ) ເລກທີ 27/ຄຄຊ, ລົງວັນທີ 29/03/2022.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27/09/2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ຜ-ຟຟລ" ຫຼື "ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານ ສະໄໝສາມັນ ຄັ້ງທີ 1/2023 ວັນທີ 20/03/2023, ເຊິ່ງມີລາຍລະອຽດລຸ່ມນີ້:

1. ອະນຸມັດ ບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2022.
2. ອະນຸມັດ ເອກະສານລາຍງານການເງິນຂອງບໍລິສັດ ປະຈຳປີ 2022 ທາງດ້ານຫຼັກການ ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ດຳເນີນການ ແລະ ອະນຸມັດລົງນາມໃນເອກະສານລາຍງານການເງິນປະຈຳປີ 2022 ພາຍຫຼັງທີ່ໄດ້ຮັບການຢັ້ງຢືນການກວດສອບສຳເລັດຈາກຜູ້ກວດສອບພາຍນອກໃນຂັ້ນຕໍ່ໄປ.
3. ອະນຸມັດ ການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2022, ການກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະໄດ້ຮັບເງິນປັນຜົນ ແລະ ການກຳນົດວັນທີຈ່າຍເງິນປັນຜົນ.
4. ອະນຸມັດ ການປັບປຸງຕົວຄູນດັດສະນີເງິນເດືອນພື້ນຖານ ຂອງພະນັກງານບໍລິສັດ ໃນສົກປີ 2023.
5. ອະນຸມັດ ການແຕ່ງຕັ້ງ ປະທານສະພາບໍລິຫານ ແລະ ກຳມະການສະພາບໍລິຫານ ຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ, ການແຕ່ງຕັ້ງຮອງປະທານສະພາບໍລິຫານ ແລະ ກຳມະການສະພາບໍລິຫານ ບາງທ່ານທີ່ຄົບອາຍຸການ, ການແຕ່ງຕັ້ງກຳມະການສະພາບໍລິຫານເພີ່ມ ແລະ ການກຳນົດອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດ.
6. ອະນຸມັດ ການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.

ສະພາບໍລິຫານບໍລິສັດໃຫ້ນຳສະເໜີບັນດາເລື່ອງເຫຼົ່ານີ້ ຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ເພື່ອພິຈາລະນາຮັບຮອງ.

ພ້ອມກັນນີ້, ບໍລິສັດ ຂໍແຈ້ງວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ດັ່ງນີ້:

ວາລະທີ 1: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາ.
ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2023.
ວາລະທີ 3: ພິຈາລະນາ ແລະ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2022 ແລະ ການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2022.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ 2392,
ໂທລະສັບ: (856-21) 316142 ແຟັກ: (856-21) 316141, ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

| | |
|---|---|
| ວາລະທີ 4: | ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2022 ລວມທັງລາຍງານການເງິນຂອງບໍລິສັດ ປີ 2022 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2023. |
| ວາລະທີ 5: | ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2022 ແລະ ການກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະໄດ້ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງບໍລິສັດ ແລະ ການກຳນົດວັນທີຈ່າຍເງິນປັນຜົນ. |
| ວາລະທີ 6: | ພິຈາລະນາ ແລະ ອະນຸມັດການປັບປຸງຕົວຄູນດັດສະນີເງິນເດືອນພື້ນຖານຂອງພະນັກງານບໍລິສັດ ໃນສົກປີ 2023. |
| ວາລະທີ 7: | ການແຕ່ງຕັ້ງປະທານສະພາບໍລິຫານ, ກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ, ການແຕ່ງຕັ້ງຮອງປະທານສະພາບໍລິຫານ, ກຳມະການສະພາບໍລິຫານບາງທ່ານທີ່ຄົບອາຍຸການ, ການແຕ່ງຕັ້ງກຳມະການສະພາບໍລິຫານເພີ່ມ ແລະ ການກຳນົດອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດ. |
| ວາລະທີ 8: | ການດັດແກ້ກົດລະບຽບບໍລິສັດ ມາດຕາ 09 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ. |

ແລະ (1) ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການກຳນົດລາຍລະອຽດ ແລະ ເງື່ອນໄຂຕ່າງໆທີ່ຈຳເປັນ ກ່ຽວກັບການກະກຽມເປີດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ໄດ້ທຸກປະການ, ລວມທັງໃຫ້ມີອຳນາດໃນການດຳເນີນການໃດໜຶ່ງອັນຈຳເປັນ ລວມທັງການກະກຽມເອກະສານຕ່າງໆ ແລະ ດຳເນີນການໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ; ແລະ

(2) ແຕ່ງຕັ້ງ ທ່ານ ຄຳມູນ ວິພົງໄຊ, ທ່ານ ຄຳແກ້ວ ວິສີສົມບັດ ແລະ ທ່ານ ປອ. ພັນປະກິດ ອ່ອນພັນດາລາ ກຳມະການສະພາບໍລິຫານອິດສະຫຼະ ເປັນຜູ້ມອບຮັບສັນທະຈາກຜູ້ຖືຮຸ້ນ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານ ເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

**<u>ກຳມະການສະພາບໍລິຫານ / ຜູ້ອຳນວຍການໃຫຍ່</u>**

ພະລັງງານ ແລະ ບໍ່ແຮ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນຫຼວງວຽງຈັນ

**ວັນແສງ ວັນນະວົງ**
**ຮັກສາການ ຜູ້ອຳນວຍການໃຫຍ່**



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ 2392,
ໂທລະສັບ: (856-21) 316142 ແຟັກ: (856-21) 316141. ອີເມວ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la